# ພາກທີ18

ເນື້ອໃນຂອງພາກນີ້ ຄື:


ເລື່ອງລາວຊີວິດຄູ່ຂອງນາງໂລຣາ ແລະ ທ້າວຫຼຸຍ 314
ເປັນຫຍັງຜູ້ຊາຍຈິ່ງຂົ່ມເຫັງແມ່ຍິງ? 316
ຄວາມຮຸນແຮງຊະນິດຕ່າງໆ 317
ສັນຍານເຕືອນໄພ 318
ວົງວຽນຂອງຄວາມຮຸນແຮງ 319
ຜົນຮ້າຍຂອງຄວາມຮຸນແຮງ 320
ເຫດຜົນທີ່ແມ່ຍິງຍັງສືບຕໍ່ຢູ່ກິນກັບຜູ້ຊາຍທີ່ເຮັດໃຫ້ເຂົາເຈົ້າເສຍໃຈ 321
ສິ່ງທີ່ຄວນເຮັດ 322
ສ້າງແຜນເພື່ອຄວາມປອດໄພ 322
ຖ້າວ່າທ່ານຈະໜີ 323
ໃຊ້ຄວາມພະຍາຍາມເພື່ອປ່ຽນແປງສະພາບການ 323
ໂອ້ລົມກັນກ່ຽວກັບຄວາມຮຸນແຮງ 323
ຈັດຕັ້ງບໍລິການເພື່ອຊ່ວຍເຫຼືອແມ່ຍິງທີ່ໜີຈາກຄວາມຮຸນແຮງ 324
ໃຊ້ຄວາມກົດດັນຂອງສັງຄົມ 324
ຄຳແນະນຳສຳລັບ ອສບ 325


*ສາມາດອ່ານເພີ່ມເຕີມໃນພາກຕໍ່ໄປ: ການຂົ່ມຂືນ ແລະ ການທາລຸນທາງເພດໃນໜ້າທີ 327.*

HLI Seattle
Health Leadership International
Field Draft Copy

# ຄວາມຮຸນແຮງຕໍ່ແມ່ຍິງ




ທຸກໆມື້ ມີແມ່ຍິງຖືກຕີບຕີ, ຖືກດ່າວ່າ, ຂົ່ມຂູ່, ຂົ່ມເຫັງ, ລ່ວງລະເມີດທາງເພດ ແລະ ບາງຄັ້ງຍັງຖືກຂ້າ ໂດຍຄູ່ນອນຂອງເຂົາເຈົ້າເອງ. ແຕ່ໂດຍທົ່ວໄປພວກເຮົາຈະບໍ່ໄດ້ຍິນກ່ຽວກັບຄວາມຮຸນແຮງເຫຼົ່ານີ້, ເພາະວ່າ ແມ່ຍິງຜູ້ທີ່ຖືກທາລຸນອາດຈະຮູ້ສຶກອາຍ, ໂດດດ່ຽວ ແລະ ຢ້ານທີ່ຈະເວົ້າສູ່ຜູ້ອື່ນໆຟັງ. ມີທ່ານໝໍ, ພະຍາບານ ແລະ ອສບ ຫຼາຍໆຄົນບໍ່ຮັບຮູ້ວ່າຄວາມຮຸນແຮງເປັນບັນຫາທາງສຸຂະພາບທີ່ຮ້າຍແຮງ.

*ບໍ່ມີເຫດຜົນອັນໃດທີ່ຄົນຜູ້ໜຶ່ງຈະຖືກຂົ້ມເຫັງ ແລະ ທາລຸນ.*

ເນື້ອໃນຂອງພາກນີ້ໄດ້ກ່າວເຖິງຄວາມຮຸນແຮງທີ່ເກີດຂຶ້ນລະຫວ່າງແມ່ຍິງ ແລະ ຄູ່ນອນທີ່ເປັນເພດຊາຍຂອງເຂົາເຈົ້າ. ມັນອາດຈະເຮັດໃຫ້ທ່ານເຂົ້າໃຈສາເຫດຂອງຄວາມຮຸນແຮງ, ສິ່ງທີ່ທ່ານຄວນເຮັດ ແລະ ສິ່ງທີ່ທ່ານຄວນປະຕິບັດເພື່ອປ່ຽນແປງສະພາບການຢູ່ໃນຊຸມຊົນຂອງທ່ານ.

ເຖິງວ່າເນື້ອໃນຂອງພາກນີ້ຈະກ່າວເຖິງແຕ່ຄວາມຮຸນແຮງທີ່ເກີດຂຶ້ນລະຫວ່າງແມ່ຍິງ ແລະ ຜູ້ຊາຍຕໍ່ຕາມ, ແຕ່ຄວາມຮຸນແຮງສາມາດເກີດຂຶ້ນນຳຜູ້ທີ່ມີການພົວພັນແບບໃກ້ຊິດຊະນິດໃດກໍ່ໄດ້ ເຊັ່ນລະຫວ່າງ ແມ່ຍ່າ ແລະ ລູກໄພ້ໃໝ່, ລະຫວ່າງພໍ່ແມ່ກັບລູກໆ, ລະຫວ່າງເດັກຜູ້ໃຫຍ່ ແລະ ຜູ້ທີ່ນ້ອຍກວ່າ, ລະຫວ່າງສະມາຊິກໃນຄອບຄົວກັບຜູ້ເຖົ້າທີ່ຢູ່ເຮືອນດຽວກັນ ແລະ ລະຫວ່າງຄູ່ນອນທີ່ມີເພດດຽວກັນ.

HLI Seattle
Health Leadership International
Field Draft Copy

## ເລື່ອງລາວຊີວິດຄູ່ຂອງນາງໂລຣາ ແລະ ທ້າວຫຼຸຍ

ດ້າວຫຼຸຍ ມີອາຍຸແກ່ວ່ານາງໂລຣາ 12 ປີ. ໃນເວລາທີ່ເຂົາເຈົ້າພົບກັນທ້າວຫຼຸຍໄດ້ເປັນພໍ່ຄ້າທີ່ປະສົບຜົນສໍາເລັດແລ້ວ. ລາວເປັນເຈົ້າຂອງຮ້ານຄ້າທີ່ນາງໂລຣາເປັນຄົນຮັບຈ້າງຂາຍເຄື່ອງ, ເພື່ອຫາເງິນຊ່ວຍພໍ່ແມ່ຈ່າຍຄ່າເຊົ່າເຮືອນ. ທ້າວຫຼຸຍເປັນຊາຍທີ່ມີສະເໜ່ ແລະ ມັກຈະລົມເລື່ອງການດໍາລົງຊີວິດຖ້າຫາກເຂົາເຈົ້າໄດ້ຢູ່ຮ່ວມກັນ. ລາວເວົ້າກັບນາງໂລຣາວ່າ ລາວຈະຊື້ທຸກຢ່າງທີ່ນາງຢາກຈະໄດ້ ແລະ ນາງຈະເປັນ "ແມ່ຍິງທີ່ລາວຮັກທີ່ສຸດພຽງຜູ້ດຽວ: ລາວຊື້ເຄື່ອງນຸ່ງໃໝ່ໆໃຫ້ນາງ ແລະ ມັກຈະແຍງນາງວ່າເວລານາງນຸ່ງເຄື່ອງເຫຼົ່ານັ້ນ ນາງເປັນຜູ້ຍິງທີ່ງາມຫຼາຍ, ທັງບອກໃຫ້ນາງເຊົານຸ່ງເຄື່ອງທີ່ນາງເຄີຍນຸ່ງ. ໃນທີ່ສຸດລາວກໍ່ຫຽວໄປຫານາງທຸກໆມື້ ແລະ ບອກໃຫ້ນາງອອກການເພື່ອແຕ່ງງານກັບລາວ.

ຫຼັງຈາກແຕ່ງງານ, ນາງໂລຣາຄາດວ່າທ້າວຫຼຸຍຈະຮັກສາຄໍາໝັ້ນສັນຍາ, ແຕ່ສະພາບການເລີ່ມປ່ຽນແປງໄປ. ທ້າວຫຼຸຍບໍ່ອະນຸຍາດໃຫ້ນາງອອກນອກເຮືອນ ຍ້ອນວ່າ "ນາງເປັນຄົນຂີ້ລ້າຍ". ຄວາມຈິງແລ້ວ, ລາວບໍ່ໃຫ້ນາງນຸ່ງເຄື່ອງໃໝ່, ທັງເອົາເຄື່ອງທີ່ລາວໄດ້ຊື້ໃຫ້ນາງນັ້ນໄປຈູດໄຟຖິ້ມ ພ້ອມທັງເວົ້າວ່າ "ແມ່ຍິງຂີ້ລ້າຍ ແລະ ໂງ່ຄືເຈົ້າບໍ່ເໝາະສົມທີ່ຈະໃຊ້ເຄື່ອງນຸ່ງເຫຼົ່ານັ້ນ" ມີມື້ໜຶ່ງລາວກັບມາເຮືອນຕອນທ່ຽງ ແລະ ດຶງເຄື່ອງທີ່ຕາກຢູ່ຜຽກລົງໝົດ, ພ້ອມທັງຫາເລື່ອງໃສ່ນາງວ່ານາງໄດ້ນອນກັບໝູ່ຂອງລາວ. ເວລາທີ່ນາງເວົ້າວ່ານາງຫາກໍ່ກັບມາແຕ່ໄປຢ້ຽມຢາມແມ່, ທ້າວຫຼຸຍກໍ່ເວົ້າໃຫ້ວ່ານາງເປັນແມ່ຍິງທີ່ບໍ່ດີ (ແມ່ຍິງແພດສະຫຍາ) ພ້ອມທັງຕີນາງນໍາອີກ.



ລາວເວົ້າວ່ານາງບໍ່ມີສິດໄປຢ້ຽມຢາມຄອບຄົວ ແລະ ຄອບຄົວກໍ່ບໍ່ຕ້ອງການນາງອີກ. ລາວບໍ່ໄດ້ເວົ້າຫຍັງຕື່ມອີກກ່ຽວກັບເລື່ອງນັ້ນ. ເມື່ອລາວກັບມາຕອນກາງຄືນຂອງມື້ນັ້ນ, ລາວໄດ້ຊື້ຂອງຂັວນມາມອບໃຫ້ນາງ ແລະ ເວົ້າວ່າລາວຮັກນາງຫຼາຍ ແລະ ຢາກຈະດູແລນາງ.

ໃນເມື່ອນາງໂລຣາຖືພາ, ນາງຄິດວ່າທ້າວຫຼຸຍຄົງຈະປະຕິບັດຕໍ່ນາງດີກວ່າເກົ່າ. ແຕ່ຄ້າຍກັບວ່າເຮັດໃຫ້ລາວມີຂໍ້ອ້າງທີ່ຈະຕີນາງຫຼາຍກວ່າເກົ່າ. ເວລາລາວໃຈຮ້າຍ, ລາວຈະຕີ ແລະ ເຕະທ້ອງນາງ. ນາງເຈັບຫຼາຍ ແລະ ຢ້ານຈະແທ້ງລູກ ແຕ່ນາງບໍ່ມີບ່ອນຈະໄປ. ເພາະວ່ານາງເຊື່ອຄວາມເວົ້າຂອງທ້າວຫຼຸຍທີ່ວ່າ ຄອບຄົວຂອງນາງບໍ່ຕ້ອງການນາງອີກ ແລະ ຄຽງຄູ່ກັນນັ້ນ ນາງບໍ່ມີເງິນທີ່ເປັນຂອງນາງເອງເລີຍ. ມີຫຼາຍໆຄັ້ງໃນເວລາທີ່ທ້າວຫຼຸຍຄວບຄຸມສະຕິຂອງຕົນເອງໄດ້ເປັນຫຼາຍໆອາທິດ, ຊຶ່ງເຮັດໃຫ້ ນາງເຂົ້າຂ້າງຕົນເອງວ່າທຸກສິ່ງທຸກຢ່າງຄົງຈະຮຽບຮ້ອຍດີ, ຖ້າວ່ານາງສາມາດຝຶກຕົນເອງໃຫ້ຫຼີກເວັ້ນຈາກການກະທໍາທີ່ເຮັດໃຫ້ລາວໃຈຮ້າຍ, ນາງໄດ້ໃຊ້ຄວາມພະຍາຍາມຫຼາຍກວ່າເກົ່າ ແຕ່ບໍ່ມີຫຍັງປ່ຽນແປງເລີຍ.

ເມື່ອຫຼາຍໆປີຜ່ານໄປ, ທ້າວຫຼຸຍດື່ມເຫຼົ້າຫຼາຍກວ່າເກົ່າ ແລະ ໂຍນລາວຕໍາໃສ່ກັບຝາເຮືອນ, ທັງບັງຄັບໃຫ້ນາງຮ່ວມເພດນໍາທັງໆທີ່ຮ່າງກາຍຂອງລາວຍັງເຈັບ ແລະ ບອບຊໍ້າຈາກການທຸບຕີຂອງລາວເອງ. ມີມື້ ໜຶ່ງນາງຕື່ນສະດຸ້ງຂຶ້ນມາຕອນກາງຄືນ ແລະ ເຫັນລາວຈັບມີດຈໍ່ໃສ່ຄໍຂອງນາງ.ມື້ຕໍ່ມາລາວເວົ້າກັບນາງວ່າລາວເຫັນນາງເປັນຄືສິ່ງທີ່ໜ້າລັງກຽດ. ລາວມັກຈະເວົ້າກັບນາງວ່າ "ຖ້ານາງເລົ່າເລື່ອງຂອງລາວໃຫ້ຜູ້ອື່ນຟັງ" ລາວຈະຂ້ານາງ. ນາງກໍ່ບໍ່ໄດ້ເລົ່າເລື່ອງສູ່ໃຜຟັງ ແລະ ນາງກໍ່ອອກຈາກເຮືອນໜ້ອຍທີ່ສຸດ. ນາງລັງກຽດຄວາມຄິດຂອງຄົນທີ່ເຫັນບາດ ຫຼື ຮອຍຊໍ້າຂອງນາງ ແລະ ຮູ້ເລື່ອງທີ່ຜົວຂອງນາງເຮັດກັບ ນາງ. ນາງມັກຈະຄິດຢາກຈະໜີແຕ່ບໍ່ຮູ້ວ່າຈະໄປໃສ.

HLI Seattle
Health Leadership International
Field Draft Copy

ຫຼັງຈາກ 12 ປີທີ່ເປັນເມຍຂອງທ້າວຫຼຸຍ, ບໍ່ພຽງແຕ່ນາງຢ້ານສິ່ງທີ່ລາວເຮັດກັບນາງ, ແຕ່ຖ້ານາງບໍ່ມີລາວ, ນາງກໍ່ບໍ່ມີເຮືອນຊານ, ບໍ່ມີເງິນຄຳ ແລະ ບໍ່ມີພໍ່ຂອງລູກລາວອີກ. ທ້າວຫຼຸຍໄດ້ເລົ່າເລື່ອງບໍ່ດີຂອງນາງສູ່ຄົນໃນຮ້ານຄ້າທີ່ນາງເຄີຍເຮັດວຽກຢູ່ ແລະ ນາງກໍ່ຮູ້ເລື່ອງນັ້ນ. ຍ້ອນວ່ານາງມີລູກ, ຜູ້ໃດກໍ່ບໍ່ຢາກໄດ້ນາງໄປເຮັດວຽກເປັນແມ່ບ້ານ. ນາງໂລຣາຮູ້ສຶກເປົ່າປ່ຽວຫຼາຍ.ພໍ່ຂອງນາງໂລຣາໄດ້ເສຍຊີວິດແລ້ວ ແລະ ແມ່ຂອງນາງກໍ່ອາໄສຢູ່ນຳເຮືອນອ້າຍຂອງນາງ, ເຊິ່ງຢູ່ເຮືອນຫຼັງນັ້ນກໍ່ບໍ່ມີຫ້ອງສຳລັບນາງ ແລະ ລູກ. ເອື້ອຍຂອງນາງເປັນຄົນເຄັ່ງຄັດທາງສາດສະໜາ ແລະ ບອກນາງວ່າແມ່ນໜ້າທີ່ຂອງນາງທີ່ຈະຕ້ອງຢູ່ກັບຜົວເຖິງວ່ານາງຈະຖືກຂ້າກໍ່ຕາມ “ເຊິ່ງຖືວ່ານັ້ນແມ່ນຟ້າກຳນົດ”. ຢູ່ເຮືອນລາວມີວຽກຫຼາຍ ແລະ ຫຍຸ້ງຢູ່ເລີຍໆໃນເມື່ອເວລາທີ່ນາງອອກໄປນອກເຮືອນ ຫຼື ມີຄົນມາຢາມຢູ່ເຮືອນເຮັດໃຫ້ທ້າວຫຼຸຍໂວຍວາຍໃຈຮ້າຍ, ນາງກໍ່ເລີຍຢຸດການພົບປະກັບໝູ່ເພື່ອນ. ນາງແນ່ໃຈວ່າພວກເຂົາເຈົ້າຄົງຈະໃຊ້ເວລາດົນສົມຄວນເພື່ອຢຸດເຊົາຄິດຮອດນາງ. ຄຽງຄູ່ກັນນັ້ນ, ກໍ່ມີຫຼາຍໆຄົນທີ່ຄິດວ່າ, ເປັນເລື່ອງປົກກະຕິທີ່ຜູ້ຊາຍຈະ “ລົງໂທດ” ເມຍຂອງຕົນເອງ.

ມີຄືນໜຶ່ງ, ເມື່ອລູກສາວກົກອາຍຸ 11 ປີ ຮ້ອງໄຫ້ມາຫານາງ ແລະ ເວົ້າສູ່ນາງຟັງວ່າທ້າວຫຼຸຍໄດ້ຕີລາວໃຫ້ລົ້ມລົງ. ນາງຕົກໃຈຊ໊ອກ, ເພາະນາງຄິດວ່າເດັກນ້ອຍບໍ່ຄວນຈະໄດ້ຮັບຜົນກະທົບຈາກພຶດຕິກຳຂອງທ້າວຫຼຸຍ. ນາງຮູ້ວ່າເປັນເລື່ອງທີ່ບໍ່ດີຖ້າຈະປະເຊີນໜ້າກັບລາວ ແຕ່ນາງຈະບໍ່ໃຫ້ສະພາບແບບນີ້ເກີດຂຶ້ນອີກ.

ໃນເວລາທີ່ນາງແທ້ງລູກຜູ້ສຸດທ້າຍ, ອສບ ຜູ້ທີ່ກວດນາງໄດ້ສອບຖາມເລື່ອງບາດແຜຂອງນາງ. ນາງໄດ້ກ່າວແກ້ຕົວກັບ ອສບ ອີກ, ອສບ ຜູ້ນັ້ນກໍ່ງຶກຫົວ ແລະ ໄດ້ເອົານາມບັດພ້ອມທັງທີ່ຢູ່ຂອງເພິ່ນຢູ່ເມືອງໜຶ່ງອີກໃຫ້ນາງ. ແພດຜູ້ນັ້ນເວົ້າກັບນາງວ່າ, ຖ້ານາງຢາກຈະໜີ, ນາງແລະລູກສາມາດໄປຫາເພິ່ນຢູ່ບ່ອນນັ້ນ ແລະ ເມື່ອນາງຕັດສິນໃຈໜີໃຫ້ນາງແນ່ໃຈເສຍກ່ອນ. ດຽວນີ້, ນາງໂຣລາພ້ອມແລ້ວທີ່ຈະໜີ.

## ເປັນຫຍັງທ້າວຫຼຸຍຈຶ່ງຕີນາງໂລຣາ? ບາງຄົນມີຄວາມຄິດທີ່ຜິດໆ ເຊັ່ນ:




ຄວາມຈິງ: ບໍ່ມີຜູ້ຊາຍຜູ້ໃດມີສິດຕີເມຍຂອງລາວ. ແມ່ຍິງບໍ່ໄດ້ເຮັດຫຍັງເລີຍທີ່ເຮັດໃຫ້ຜູ້ຊາຍມີສິດຕີເຂົາເຈົ້າໄດ້, ເຖິງຜູ້ຊາຍຈະຄິດວ່າເຂົາເຈົ້າມີສິດກໍ່ຕາມ.




ຄວາມຈິງ: ເຫຼົ້າບໍ່ແມ່ນສາເຫດຂອງຄວາມຮຸນແຮງ ແຕ່ມັນເຮັດໃຫ້ຄວາມຮຸນແຮງໂຫດຮ້າຍຂຶ້ນຕື່ມ. ຄວາມຮຸນແຮງກໍ່ສາມາດເກີດຂຶ້ນໄດ້ເໝືອນກັນຢູ່ບ່ອນທີ່ຄົນບໍ່ໄດ້ດື່ມເຫຼົ້າ.




ຄວາມຈິງ: ການຂ້ຽນຕີບໍ່ ແມ່ນເຄື່ອງໝາຍຂອງຄວາມຮັກ ຄວາມຮັກໝາຍເຖິງຄວາມນັບຖືແລະ ເມດຕາກະລຸນາເຊິ່ງກັນ ແລະ ກັນ.




ຄວາມຈິງ: ຄວາມຮຸນແຮງບໍ່ແມ່ນແຕ່ເປັນເລື່ອງຂອງຄອບຄົວ. ແມ່ຍິງຫຼາຍຄົນຖືກຂ້ຽນຕີແລະຖືກຂ້າ. ຄວາມຮຸນແຮງແມ່ນບັນຫາຂອງສັງຄົມ ແລະ ຊຸມຊົນ.




ຄວາມຈິງ: ຄວາມຮຸນແຮງບໍ່ແມ່ນບັນຫາຂອງຄວາມທຸກຍາກ ແລະ ຄວາມໂງ່. ມັນສາມາດເກີດຂຶ້ນຢູ່ຊົນຊັ້ນໃດກໍ່ໄດ້: ຜູ້ຮັ່ງມີຫຼືຜູ້ທຸກ, ຜູ້ໄດ້ຮັບການສຶກສາ ຫຼື ມີການສຶກສາຕ່ຳ, ເກີດຂຶ້ນຢູ່ໃນເມືອງ ຫຼື ຊົນນະບົດກໍ່ໄດ້.




ຄວາມຈິງ: ມັນບໍ່ແມ່ນເລື່ອງດີສະເໝີໄປທີ່ແມ່ຍິງຜູ້ໜຶ່ງຈະທົນທຸກຢູ່ນຳຜູ້ຊາຍທີ່ໃຊ້ຄວາມຮຸນແຮງ. ຜູ້ຊາຍຜູ້ນັ້ນໄດ້ສິດສອນລູກໄປໃນທາງທີ່ບໍ່ດີ ເພື່ອຮັບກັບອາລົມຂອງພວກເຂົາ ແລະ ສິດສອນລູກທີ່ຜິດພາດ ເພື່ອປະຕິບັດຕໍ່ເພດຍິງ. ລາວບໍ່ແມ່ນພໍ່ທີ່ດີແລ້ວຖ້າລາວຫາກຕີແມ່ຂອງລູກລາວ ຫຼື ຕີລູກຂອງລາວນຳ.

HLI Seattle
Health Leadership International
Field Draft Copy

## ເປັນຫຍັງຜູ້ຊາຍຈຶ່ງທຳຮ້າຍແມ່ຍິງ?

ເຫດຜົນເຫຼົ່ານີ້ອາດຈະອະທິບາຍເປັນຫຍັງຜູ້ຊາຍຈຶ່ງທາລຸນເມຍຂອງເຂົາເຈົ້າແຕ່ນັ້ນບໍ່ໄດ້ອະນຸຍາດໃຫ້ຜູ້ຊາຍມີຄວາມຮຸນແຮງ

ຜູ້ຊາຍມີຂໍ້ແກ້ຕົວຢ່າງຫຼວງຫຼາຍ ເພື່ອທຳຮ້າຍແມ່ຍິງເຊັ່ນ: ເຂົາເຈົ້າເມົາເຫຼົ້າ, ບໍ່ສາມາດຄວບຄຸມຕົນເອງໄດ້, "ຫຼືແມ່ຍິງເປັນຜູ້ກະທຳຜິດ". ແຕ່ຜູ້ຊາຍເລືອກໃຊ້ຄວາມຮຸນແຮງເພາະວ່າເຂົາເຈົ້າສາມາດໄດ້ສິ່ງທີ່ເຂົາເຈົ້າຕ້ອງການ ຫຼື ເຂົາເຈົ້າຄິດວ່າແມ່ນສິດທິຂອງເຂົາເຈົ້າທີ່ເປັນຜູ້ຊາຍ.

ໃນເມື່ອຜູ້ຊາຍຮູ້ສຶກວ່າຕົນບໍ່ມີອຳນາດໃນຊີວິດຂອງຕົນເອງ, ເຂົາເຈົ້າອາດຈະໃຊ້ຄວາມຮຸນແຮງເພື່ອຄວບຄຸມຊີວິດຂອງຜູ້ອື່ນ. ເປັນເລື່ອງປົກກະຕິທຳມະດາທີ່ຜູ້ໃດກໍ່ຢາກຈະຄວບຄຸມ ຊີວິດຂອງຕົນເອງ, ແຕ່ເປັນເລື່ອງທີ່ຜິດພາດທີ່ຈະພະຍາຍາມຄອບຄຸມຊີວິດຂອງຜູ້ອື່ນໂດຍສະເພາະ ຍັງນຳໃຊ້ຄວາມຮຸນແຮງອີກ. ຕໍ່ໄປນີ້ແມ່ນເຫດຜົນຂອງຜູ້ຊາຍບາງຄົນເພື່ອຂົ່ມຕີແມ່ຍິງ:

ຄວາມຮຸນແຮງ ແລະ ການທາລຸນມັກເກີດຂຶ້ນເມື່ອຜູ້ໜຶ່ງມີກຳລັງເໜືອກວ່າຜູ້ອື່ນ.

**1. ຍ້ອນຜົນຂອງຄວາມຮຸນແຮງ.**

- ມັນເຮັດໃຫ້ຜູ້ຊາຍສາມາດປິດຄວາມບໍ່ລົງຮອຍກັນຢ່າງໄວວາໂດຍທີ່ຍັງບໍ່ທັນໄດ້ລົມກັນເຖິງບັນຫາທີ່ແທ້ຈິງ ຫຼື ຊອກຫາຊ່ອງທາງແກ້ໄຂທີ່ແທ້ຈິງ.
- ມັນອາດຈະເຮັດໃຫ້ຜູ້ຊາຍຮູ້ສຶກວ່າການຂົ່ມຕີນັ້ນມັນຕື່ນເຕັ້ນ ແລະ ສະແດງວ່າລາວມີພະລັງແຮງຢ່າງຫຼວງຫຼາຍ. ເຂົາເຈົ້າອາດຈະຢາກຈະມີຄວາມຮູ້ສຶກນັ້ນອີກ.
- ຖ້າວ່າຜູ້ຊາຍໃຊ້ຄວາມຮຸນແຮງ, ເຂົາເຈົ້າຈະຊະນະ ແລະ ໄດ້ສິ່ງທີ່ເຂົາເຈົ້າຕ້ອງການ. ຜູ້ຖືກເຄາະຮ້າຍອາດຈະຍອມໃຫ້ລາວໄດ້ຕາມຄວາມຕ້ອງການອີກເທື່ອໃໝ່ ເພື່ອຫຼີກເວັ້ນບໍ່ໃຫ້ຖືກຂົ່ມຕີ. ລັກສະນະນີ້ຍັງ ເຮັດໃຫ້ຜູ້ຊາຍບ້າອຳນາດຫຼາຍກວ່າເກົ່າ.

**2. ຜູ້ຊາຍມີຄວາມຄິດທີ່ຜິດຕໍ່ຄຳວ່າເປັນຜູ້ຊາຍ.**

- ຖ້າຜູ້ຊາຍເຊື່ອວ່າ, ຖ້າເປັນຜູ້ຊາຍເຂົາເຈົ້າຕ້ອງຄວບຄຸມທຸກສິ່ງທຸກຢ່າງທີ່ແມ່ຍິງເຮັດ, ດັ່ງນັ້ນຈຶ່ງເປັນເລື່ອງທຳມະດາທີ່ຈະຂົ່ມຕີແມ່ຍິງ.
- ພູ້ຊາຍບາງຄົນຄິດວ່າ ເຂົາເຈົ້າມີສິດຕໍ່ບາງສິ່ງບາງຢ່າງເຊັ່ນ: ຕໍ່ "ເມຍທີ່ດີຂອງລາວ", ຕໍ່ລູກຊາຍ ແລະ ຕໍ່ການຕັດສິນໃຈທຸກຢ່າງຢູ່ໃນຄອບຄົວ. ທັງນີ້ກໍ່ຍ້ອນວ່າເຂົາເຈົ້າເປັນຜູ້ຊາຍ.

**3. ຜູ້ຊາຍອາດຈະຄິດວ່າແມ່ຍິງເປັນສົມບັດຂອງເຂົາເຈົ້າ ຫຼື ເຂົາເຈົ້າຕ້ອງການແມ່ຍິງ.**

- ຖ້າວ່າແມ່ຍິງຫາກເປັນຄົນ "ເຂັ້ມແຂງ", ຜູ້ຊາຍອາດຈະຢ້ານເສຍລາວໄປ, ຫຼື ລາວອາດຈະບໍ່ຕ້ອງການຜູ້ຊາຍຜູ້ນັ້ນ, ດັ່ງນັ້ນຜູ້ຊາຍຈຶ່ງເຮັດອັນໃດອັນໜຶ່ງເພື່ອເຮັດໃຫ້ແມ່ຍິງເອື່ອຍອີງໃສ່ເຂົາ.

**4. ຜູ້ຊາຍບໍ່ຮູ້ທາງອື່ນອີກແລ້ວ.**

- ຖ້າວ່າຜູ້ຊາຍຫາກເຫັນພໍ່ຂອງເຂົາເຈົ້າ ຫຼື ຜູ້ອື່ນໆ ສະແດງຄວາມຮຸນແຮງ ໃນເວລາທີ່ພວກເຂົາເຫຼົ່ານັ້ນຢູ່ໃນສະພາບທີ່ຫຍຸ້ງຍາກຂອງຊີວິດ ຫຼື ໂສກເສົ້າ, ຫຼັງຈາກນັ້ນຜູ້ຊາຍຜູ້ນັ້ນກໍ່ບໍ່ຮູ້ວິທີອື່ນອີກທີ່ຈະເຮັດນອກຈາກຄວາມຮຸນແຮງ.



*ຖ້າວ່າຜູ້ຊາຍຫາກຄິດວ່າແມ່ຍິງເປັນກຳມະສິດ ຫຼື ຊັບສິນຂອງເຂົາເຈົ້າ, ເຂົາເຈົ້າອາດຈະຄິດວ່າເປັນສິດຂອງເຂົາເຈົ້າທີ່ຈະປະຕິດບັດອັນໃດກໍ່ໄດ້ຕາມທີ່ເຂົາເຈົ້າຕ້ອງການ.*

182
ເພດ ແລະ ບົດບາດຂອງຍິງຊາຍ

HLI Seattle Health Leadership International Field Draft Copy

# ຄວາມຮຸນແຮງຊະນິດຕ່າງໆ



ມີຫຼາຍວິທີທີ່ຜູ້ຊາຍພະຍາຍາມໃຫ້ໄດ້ອຳນາດເໜືອກວ່າແມ່ຍິງ. ການຂົ່ມຕີເປັນພຽງວິທີໜຶ່ງເທົ່ານັ້ນ, ແຕ່ວິທີການທັງໝົດນັ້ນສາມາດເຮັດໃຫ້ແມ່ຍິງເສຍໃຈ.

ໃຫ້ວາດພາບວ່າວົງມົນຢູ່ຂ້າງລຸ່ມນີ້ເປັນວົງລໍ້. ອຳນາດ ແລະ ການຄວບຄຸມຢູ່ເຄິ່ງກາງຂອງວົງລໍ້ ເພາະວ່າມັນແມ່ນເຫດຜົນຢູ່ເບື້ອງຫຼັງຂອງການກະທຳທຸກໆຢ່າງ. ຫວ່າງລໍ້ແຕ່ລະບ່ອນແມ່ນພຶດຕິກຳຂອງຜູ້ຊາຍທີ່ໃຊ້ຄວາມຮຸນແຮງ ແລະ ອາດຈະນຳໃຊ້ມັນເພື່ອຄວບຄຸມແມ່ຍິງ. ຄວາມຮຸນແຮງແມ່ນ ຂອບເຂດຂອງກົງລໍ້ທີ່ເຕົ້າໂຮມມັນເຂົ້າກັນ ເພື່ອໃຫ້ມັນເຂັ້ມແຂງຂຶ້ນ.




## ການທາລຸນແບບໜຶ່ງມັກຈະປ່ຽນເປັນອີກແບບໜຶ່ງສະເໝີ

ມີຫຼາຍໆກໍລະນີທີ່ເລີ່ມຕົ້ນດ້ວຍການທາລຸນທາງຄຳເວົ້າ ຫຼັງຈາກນັ້ນບໍ່ດົນກໍ່ກາຍເປັນການທາລຸນທາງຮ່າງກາຍ. ມັນອາດບໍ່ຄ້າຍຄືກັນຕອນເລີ່ມຕົ້ນ, ແຕ່ຜູ້ຊາຍອາດຈະເລີ່ມຕົ້ນຢ່າງຊ້າໆ "ໂດຍບໍ່ໄດ້ຕັ້ງໃຈ" ໂດຍການຍູ້ ຫຼື ຕຳແມ່ຍິງ, ຫຼື ໄປນັ່ງບ່ອນທີ່ແມ່ຍິງເຄີຍນັ່ງຢູ່ ເພື່ອໃຫ້ແມ່ຍິງນັ້ນຕ້ອງຍ້າຍອອກ. ຖ້າວ່າພຶດຕິກຳນີ້ໄດ້ຜົນສຳລັບຜູ້ຊາຍ, ມັນອາດຈະ ຈະຮ້າຍແຮງຂຶ້ນຈົນຜູ້ຊາຍໃຊ້ຄວາມຮຸນແຮງຫຼາຍຂຶ້ນ. ບໍ່ແມ່ນແມ່ຍິງທຸກຄົນທີ່ຖືກທໍລະມານ ຈາກການທາລຸນແບບຂົ່ມຕີ, ແຕ່ແມ່ຍິງ ທີ່ຖືກຂົ່ມຕີທຸກຄົນມັກຈະປະເຊີນກັບການທາລຸນແບບອື່ນໆ.

HLT Seattle
Health Leadership International
Field Draft Copy

## ສັນຍານເຕືອນໄພ

ມັນບໍ່ກ່ຽວວ່າທ່ານຈະຮັກ ຄົນຜູ້ໜຶ່ງຫຼາຍປານໃດກໍ່ຕາມ. ຄວາມຮັກບໍ່ສາມາດປ່ຽນແປງຄົນຜູ້ໜຶ່ງໄດ້. ມີພຽງແຕ່ຄົນຜູ້ນັ້ນເລືອກທີ່ຈະປ່ຽນແປງຕົວ ເອງເທົ່ານັ້ນ.

ໃນເມື່ອການຢູ່ຮ່ວມກັນໃນການທາລຸນທາງເພດກາຍເປັນການໃຊ້ຄວາມຮຸນແຮງນັ້ນມັນເຮັດໃຫ້ເກີດຄວາມຫຍຸ້ງຍາກທີ່ໜີຈາກ. ຍິ່ງແມ່ຍິງທົນຢູ່ກັບຜູ້ຊາຍດົນເທົ່າໃດ ຜູ້ຊາຍຍິ່ງມີອຳນາດເໜືອເຂົາເຈົ້າຫຼາຍເທົ່ານັ້ນ, ແລະແມ່ຍິງເອງກໍ່ຍິ່ງຂາດຄວາມໝັ້ນໃຈໃນຕົວເອງຫຼາຍຂຶ້ນເທົ່ານັ້ນ. ຜູ້ຊາຍບາງຄົນມີລັກສະນະໃຊ້ຄວາມຮຸນແຮງຫຼາຍກວ່າຜູ້ອື່ນ. ມີບາງສັນຍານທີ່ສະແດງໃຫ້ເຫັນວ່າຜູ້ຊາຍຈະໃຊ້ຄວາມຮຸນແຮງ. ຖ້າວ່າທ່ານເຫັນອາການເຫຼົ່ານີ້ ແລະ ມີວິທີທາງທີ່ຈະໜີ, ໃຫ້ຄິດດີໆ.

ຖາມຕົວທ່ານເອງໂດຍໃຊ້ຄຳຖາມດັ່ງຕໍ່ໄປນີ້:

- ຜູ້ຊາຍຜູ້ນັ້ນສະແດງຄວາມອິດສາບໍ່ ເວລາທີ່ທ່ານພົບກັບຜູ້ອື່ນ ຫຼື ຫາຄວາມໃສ່ວ່າທ່ານເວົ້າຕົວະລາວ? ຖ້າທ່ານປ່ຽນພຶດຕິກຳຂອງທ່ານເພື່ອເຮັດໃຫ້ລາວບໍ່ອິດສາ, ນັ້ນໝາຍຄວາມວ່າລາວກຳລັງຄວບຄຸມທ່ານ.
- ຜູ້ຊາຍຫ້າມທ່ານບໍ່ໃຫ້ພົບໝູ່ຄູ່ ຫຼື ຄອບຄົວຂອງທ່ານ ຫຼື ຫ້າມທ່ານບໍ່ ໃຫ້ເຮັດສິ່ງຕ່າງໆດ້ວຍຕົວທ່ານເອງບໍ່? ເຊິ່ງບໍ່ໄດ້ກ່ຽວຂ້ອງກັບເຫດຜົນທີ່ ລາວອະທິບາຍມາ, ນັ້ນແມ່ນລາວກຳລັງເຮັດໃຫ້ທ່ານບໍ່ໄດ້ຮັບການ ຊ່ວຍເຫຼືອຈາກຄົນພວກນັ້ນ. ມັນຈຶ່ງເປັນການງ່າຍສຳລັບລາວທີ່ຈະທາລຸນທ່ານ, ຖ້າວ່າທ່ານບໍ່ມີບ່ອນເພິ່ງ.
- ຜູ້ຊາຍນັ້ນດ່າ ຫຼື ເວົ້າສຽດສີທ່ານຢູ່ຕໍ່ໜ້າຜູ້ອື່ນບໍ່? ທ່ານອາດຈະເລີ່ມເຊື່ອສິ່ງທີ່ລາວເວົ້າອອກມາ. ເຮັດແບບນັ້ນ ສາມາດເຮັດໃຫ້ທ່ານມີຄວາມຮູ້ສຶກຄ້າຍກັບວ່າແມ່ນໜ້າທີ່ຂອງທ່ານທີ່ຈະຮອງຮັບຕໍ່ການປະຕິບັດທີ່ບໍ່ດີ.
- ຜູ້ຊາຍເຮັດຫຍັງແດ່ໃນເວລາລາວໃຈຮ້າຍ? ລາວທັບ ຫຼື ແກ່ວງສິ່ງຂອງຖິ້ມບໍ່? ລາວເຄີຍທາລຸນທາງຮ່າງກາຍຂອງທ່ານບໍ່ ຫຼື ລາວເຄີຍເວົ້າດູຖູກທ່ານບໍ່? ລາວເຄີຍຕີແມ່ຍິງຜູ້ອື່ນບໍ່? ການກະທຳຕ່າງໆເຫຼົ່ານີ້ສະແດງໃຫ້ເຫັນວ່າລາວຂາດການຄວບຄຸມສະຕິຕົນເອງ.
- ລາວເຄີຍມີຄວາມຮູ້ສຶກວ່າຖືກດ່າປ້ອຍຈາກຜູ້ອື່ນທີ່ມີ ອຳນາດບໍ່, ເຊັ່ນ: ນາຍຄູຂອງລາວ, ຫົວໜ້າ ຫຼື ພໍ່ຂອງລາວ? ລາວອາດຈະຮູ້ສຶກວ່າລາວບໍ່ມີອຳນາດ, ເຊິ່ງອາດຈະເຮັດໃຫ້ລາວພະຍາຍາມຊອກຫາອຳນາດເໜືອຜູ້ອື່ນໃນຂົງເຂດອື່ນໃນຊີວິດຂອງລາວໂດຍການໃຊ້ອຳນາດ.
- ລາວມັກຈະກ່າວອ້າງວ່າ ຍ້ອນເຫຼົ້າ, ຢາເສບຕິດ ຫຼື ຄວາມກົດດັນແມ່ນເຫດຜົນທີ່ເຮັດເຊັ່ນນັ້ນ? ຖ້າວ່າລາວຕຳນິສິ່ງອື່ນໆ, ລາວອາດຈະເວົ້າວ່າທຸກສິ່ງທຸກຢ່າງຈະດີຂຶ້ນ ຖ້າວ່າລາວໄດ້ອາຊີບໃໝ່, ຍ້າຍບ່ອນໄປບ່ອນອື່ນ ຫຼື ເຊົາເສບຢາເສບຕິດ ແລະ ເຊົາກິນເຫຼົ້າ.
- ລາວໄດ້ໂຍນຄວາມຜິດໃສ່ທ່ານ ຫຼື ຜູ້ອື່ນໆ ບໍ່ກ່ຽວກັບສິ່ງທີ່ລາວສະແດງອອກມາ ຫຼື ປະຕິເສດວ່າລາວບໍ່ໄດ້ເຮັດຫຍັງຜິດ? ລາວອາດຈະບໍ່ຢາກຈະປ່ຽນແປງຕົວເອງ ຖ້າລາວຄິດວ່າສິ່ງທີ່ລາວສະແດງອອກມານັ້ນແມ່ນຄວາມຜິດຂອງຜູ້ອື່ນ.




HLI Seattle
Health Leadership International
Field Draft Copy

## ແມ່ຍິງບາງຈຳພວກມັກຈະຖືກທາລຸນຫຼາຍກວ່າ

ມີຄູ່ຜົວເມຍຫຼາຍຄູ່ທີ່ຜົວຈະກາຍເປັນຄົນໂມໂຫຮ້າຍໃນເວລາທີ່ເມຍຂອງລາວຖືພາຄັ້ງທຳອິດ. ຜົວອາດຈະມີຄວາມຮູ້ສຶກວ່າລາວຂາດການຄວບຄຸມທີ່ລາວບໍ່ສາມາດບັງຄັບການປ່ຽນແປງຂອງຮ່າງກາຍຂອງເມຍລາວໄດ້. ລາວອາດຈະໃຈຮ້າຍຍ້ອນວ່າເມຍຂອງລາວເອົາໃຈໃສ່ ແຕ່ລູກຢູ່ໃນທ້ອງ ແລະ ຫຼຸດຜ່ອນການເອົາໃຈໃສ່ລາວ, ຫຼື ເມຍອາດຈະບໍ່ຢາກຮ່ວມເພດກັບລາວ. ອີກຢ່າງໜຶ່ງຄູ່ຜົວເມຍຫຼາຍຄູ່ອາດຈະມີຄວາມກັງວົນເລື່ອງເງິນຄຳໃນເວລາທີ່ເຂົາເຈົ້າຄາດວ່າຈະມີລູກຜູ້ໃໝ່.



ແມ່ຍິງທີ່ມີຄວາມພິການກໍ່ແມ່ນອີກຈຳພວກໜຶ່ງທີ່ຖືກທາລຸນຫຼາຍກວ່າ:

- ຜູ້ຊາຍບາງຄົນອາດຈະຮູ້ສຶກໂມໂຫທີ່ຕົນເອງບໍ່ໄດ້ກັບແມ່ຍິງທີ່ "ພຽບພ້ອມ".
- ຜູ້ຊາຍອາດຈະຄິດວ່າແມ່ຍິງທີ່ມີຄວາມພິການນັ້ນຄວບຄຸມງ່າຍກວ່າ, ເພາະວ່າເຂົາເຈົ້າມີຄວາມສາມາດປ້ອງກັນຕົນເອງໜ້ອຍກວ່າ.



## ວົງວຽນຂອງຄວາມຮຸນແຮງ

ການໃຊ້ຄວາມຮຸນແຮງຄັ້ງທຳອິດເກີດຂຶ້ນໃນລັກສະນະທີ່ເປັນເຫດການໂດດດ່ຽວ ໃນຕົວຂອງມັນເອງ. ແຕ່ຫຼາຍໆກໍລະນີ, ຫຼັງຈາກຄັ້ງທຳອິດເກີດຂຶ້ນແລ້ວ, ຮູບແຕ້ມ ຫຼື ວົງວຽນດັ່ງຕໍ່ໄປນີ້ຈະເກີດຂຶ້ນ.




ໃນເມື່ອມີຄວາມຮຸນແຮງຍືດຍາວໄປ, ໄລຍະງຽບສະຫງົບກໍ່ສັ້ນລົງ ແລະ ສັ້ນລົງສຳລັບຫຼາຍໆຄູ່ຜົວເມຍ. ໃນເມື່ອຄວາມມຸ່ງໝັ້ນຂອງແມ່ຍິງແຕກສະຫຼາຍ, ຜູ້ຊາຍກໍ່ມີອຳນາດເໜືອລາວຢ່າງເຕັມທີ່, ດັ່ງນັ້ນຜູ້ຊາຍກໍ່ບໍ່ຈຳເປັນທີ່ຈະຕ້ອງໃຫ້ຄຳໝັ້ນສັນຍາວ່າທຸກສິ່ງທຸກຢ່າງມັນຈະດີຂຶ້ນ.

*ແມ່ຍິງບາງຄົນພະຍາຍາມເຮັດໃຫ້ຄວາມຮຸນແຮງເກີດຂຶ້ນເພື່ອເຮັດໃຫ້ມັນພົ້ນໄປໄວໆ ແລະ ຢາກຈະໃຫ້ມີຄວາມສະຫງົບໄວຂຶ້ນ.*

HLI Seattle
Health Leadership International
Field Limit Copy

## ຜົນຮ້າຍຂອງຄວາມຮຸນແຮງ

ຄວາມຮຸນແຮງບໍ່ພຽງແຕ່ມີຜົນກະທົບໃສ່ແຕ່ແມ່ຍິງ, ແຕ່ມັນກະທົບໃສ່ລູກ ແລະ ຊຸມຊົນໂດຍລວມເໝືອນກັນ.




ສຸຂະພາບຈິດ

### ຜົນກະທົບໃສ່ແມ່ຍິງ

ຄວາມຮຸນແຮງຂອງຜູ້ຊາຍສາມາດກະທົບໃສ່ແມ່ຍິງດັ່ງນີ້:

- ຂາດຄວາມກະຕືລືລົ້ນ ຫຼື ຂາດການຄຳນຶງເຖິງຄຸນຄ່າຂອງຕົນເອງ. ເກີດບັນຫາສຸຂະພາບຈິດເຊັ່ນ: ຄວາມກະວົນກະວາຍ ແລະ ບັນຫາການກິນ ແລະ ການນອນ. ເພື່ອຮັບມືກັບຄວາມຮຸນແຮງ, ແມ່ຍິງອາດຈະເລີ່ມຕົ້ນມີພຶດຕິກຳທີ່ເປັນຜົນຮ້າຍ ຫຼື ຂາດການຢັ້ງຄິດ ເຊັ່ນ: ເສບຢາເສບຕິດ, ດື່ມເຫຼົ້າ ຫຼື ຮ່ວມເພດກັບຫຼາຍໆຄົນ.
- ເກີດອາການເຈັບ ຫຼື ບາດແຜທີ່ຮ້າຍແຮງ ເຊັ່ນ ກະດູກຫັກ, ໄຟໄໝ້, ບາດແຜ, ຮອຍຂູດ, ເຈັບຫົວ, ເຈັບທ້ອງ ແລະ ເຈັບກ້າມເນື້ອຊຳເຮື້ອຫຼາຍໆປີ ຫຼັງຈາກທີ່ເກີດຄວາມຮຸນແຮງ.
- ສຸຂະພາບທາງເພດມີບັນຫາ, ມີແມ່ຍິງຫຼາຍຄົນຫຼຸລູກຍ້ອນຖືກຂົ່ມຕີໃນໄລຍະຖືພາ. ພວກເຂົາເຈົ້າອາດຈະປະເຊີນກັບບັນຫາການຖືພາແບບບໍ່ຕ້ອງການ, ພະຍາດຕິດຕໍ່ທາງເພດສຳພັນ (ພຕພ) ຫຼື ເຊື້ອໂລກເອດສ ແລະ ໂລກເອດສ ຊຶ່ງເກີດຂຶ້ນຍ້ອນການຫາລຸນທາງເພດ. ການຫາລຸນທາງເພດມັກຈະເຮັດໃຫ້ເກີດຄວາມຢ້ານກົວທີ່ຈະຮ່ວມເພດ, ອາການເຈັບ ແລະ ຂາດຄວາມຕ້ອງການ.
- ເສຍຊີວິດ

ພຕພ 261
ເຊື້ອໂລກເອດສ ແລະ ໂລກເອດສ 283
ຂາດຄວາມຕ້ອງການ 188

### ຜົນກະທົບໃສ່ລູກ

ໃນເມື່ອເດັກນ້ອຍເຫັນແມ່ຂອງເຂົາເຈົ້າຖືກຫາລຸນ, ມັນຈະເຮັດໃຫ້ມີຜົນກະທົບດັ່ງນີ້:

- ເດັກນ້ອຍມີພຶດຕິກຳໂມໂຫກ້າວລ້າວ - ປະເຊີນໜ້າກັບຄວາມຮຸນແຮງ ຫຼື ພວກເຂົາເຈົ້າອາດຈະກາຍເປັນຄົນງຽບ ບໍ່ເຂົ້າຮ່ວມກັບໝູ່ຄູ່ເລີຍ.
- ຝັນຮ້າຍ ແລະ ມີຄວາມຢ້ານກົວອື່ນໆ. ເດັກນ້ອຍທີ່ຢູ່ໃນຄອບຄົວທີ່ມີຄວາມຮຸນແຮງມັກຈະກິນບໍ່ໄດ້ດີ, ເຕີບໃຫຍ່ ແລະ ຮຽນໜັງສືຊ້າຫຼາຍກວ່າເດັກອື່ນໆ, ນອກນັ້ນຍັງມັກຈະເຈັບເປັນເລື້ອຍໆ ເຊັ່ນ: ເຈັບກະເພາະ, ເຈັບຫົວ ແລະ ເປັນຫືດ.
- ເຂົາເຈົ້າອາດຈະໄດ້ຮັບບາດເຈັບ ຫຼື ເສຍຊີວິດຖ້າຫາກວ່າຄວາມຮຸນແຮງນັ້ນລາມໄປເຖິງເຂົາເຈົ້າ.

*ໃນເມື່ອແມ່ຍິງຖືກຫາລຸນຢູ່ເຮືອນ, ລູກຂອງລາວຈະເຊື່ອວ່ານັ້ນແມ່ນວິທີທີ່ປະຕິບັດຕໍ່ແມ່ຍິງ.*



### ຜົນກະທົບຕໍ່ຊຸມຊົນ

ຢູ່ໃນຊຸມຊົນ, ຄວາມຮຸນແຮງອາດຈະເຮັດໃຫ້ເກີດເຫດການດັ່ງນີ້:

- ວົງວຽນຂອງຄວາມຮຸນແຮງນັ້ນສືບຕໍ່ເນື່ອງໄປສູ່ຄົນລຸ້ນຕໍ່ໄປ.
- ຄວາມເຊື່ອທີ່ຜິດພາດທີ່ວ່າ ຜູ້ຊາຍດີກວ່າແມ່ຍິງນັ້ນຈະສືບນີຕໍ່ໄປ.
- ຄຸນນະພາບຊີວິດຂອງທຸກໆຄົນກໍ່ຈະຖືກກະທົບ ຍ້ອນວ່າແມ່ຍິງມີສ່ວນຮ່ວມໜ້ອຍຢູ່ໃນຊຸມຊົນໃນເວລາທີ່ເຂົາເຈົ້າຖືກຫ້າມບໍ່ໃຫ້ອອກສຽງ ຫຼື ຖືກຂ້າຕາຍດ້ວຍຄວາມຮຸນແຮງ.

HLI Seattle
Health Leadership International
Field Draft Copy




## ເຫດຜົນທີ່ແມ່ຍິງຍັງສືບຕໍ່ຢູ່ກິນກັບຜູ້ຊາຍທີ່ເຮັດໃຫ້ທຳຮ້າຍພວກເຂົາ.

*ຖ້າພວກເຮົາຖາມວ່າ ເປັນຫຍັງລາວຈຶ່ງບໍ່ໜີນັ້ນ, ໝາຍຄວາມວ່ານັ້ນແມ່ນບັນຫາສ່ວນຕົວຂອງລາວທີ່ຄວນຈະແກ້ໄຂ. ທັງໝົດໃນຊຸມຊົນຕ້ອງຮັບຜິດຊອບຕໍ່ສຸຂະພາບ ແລະ ສະຫວັດດີພາບຂອງທຸກໆຄົນໃນຊຸມຊົນ.*

"ເປັນຫຍັງລາວຈຶ່ງຫົນຢູ່?" ນັ້ນແມ່ນຄຳຖາມທຳອິດທີ່ຄົນຖາມຂຶ້ນເມື່ອໄດ້ຍິນວ່າມີແມ່ຍິງຜູ້ໜຶ່ງຖືກທາລຸນ. ມີຫຼາຍໆເຫດຜົນທີ່ແມ່ຍິງເລືອກທີ່ຈະຢູ່ຮ່ວມກັບຜົວຜູ້ທີ່ໃຊ້ຄວາມຮຸນແຮງ. ເຫດຜົນຕ່າງໆນັ້ນມີດັ່ງນີ້:

- **ຄວາມຢ້ານກົວ ແລະ ການຂູ່ເຂັນ**: ຜົວຂອງລາວອາດຈະເວົ້າກັບລາວວ່າ "ຖ້າເຈົ້າໜີ, ຂ້ອຍຈະຂ້າເຈົ້າ, ຂ້າລູກ ແລະ ຂ້າແມ່ເຈົ້ານຳ". ລາວອາດຈະເຮັດທຸກສິ່ງທຸກຢ່າງສຸດຄວາມສາມາດ ເພື່ອປົກປ້ອງຕົນເອງ ແລະ ຜູ້ອື່ນໆໂດຍການຢູ່ຕໍ່ໄປ.
- **ບໍ່ມີເງິນ ແລະ ບໍ່ມີບ່ອນຈະໄປແລ້ວ:** ອັນນີ້ແມ່ນຄວາມຈິງຖ້າວ່າຜົວຂອງລາວຄວບຄຸມການເງິນຂອງຄອບຄົວ ແລະ ບໍ່ອະນຸຍາດໃຫ້ລາວໄປພົບກັບໝູ່ຄູ່ ຫຼື ຄອບຄົວຂອງລາວ.
- **ບໍ່ມີການປ້ອງກັນ:** ບໍ່ມີຫັຍງທີ່ຈະສາມາດຢຸດຍັ້ງບໍ່ໃຫ້ຜູ້ຊາຍເຂົ້າໄກ້ແມ່ຍິງ ແລະ ຂ້າລາວໄດ້.
- ຄວາມອັບອາຍ: ລາວອາດຈະຮູ້ສຶກວ່າຄວາມຮຸນແຮງແມ່ນຄວາມຜິດຂອງລາວເອງ ຫຼື ລາວຄວນຈະໄດ້ຮັບມັນ.
- ຄວາມເຊື່ອທາງສາດສະໜາ ຫຼື ວັດທະນາທຳ: ລາວອາດຈະຄິດວ່ານັ້ນແມ່ນໜ້າທີ່ຂອງລາວ ທີ່ຄວນຈະຖະນຸບຳລຸງໃຫ້ຊີວິດຄູ່ຢູ່ຕໍ່ໄປເຖິງວ່າມັນຈະເຮັດໃຫ້ລາວໝົດສິ້ນທຸກຢ່າງກໍ່ຕາມ.
- ຫວັງວ່າມີມື້ໜຶ່ງເຂົາຄົງຈະປ່ຽນແປງ: ລາວຄິດວ່າລາວຮັກຜູ້ຊາຍຜູ້ນັ້ນຫຼາຍ ແລະ ຢາກຈະຢູ່ຮ່ວມກັນຕໍ່ໄປ. ລາວຍັງຄິດວ່າ ຄົງຈະມີວິທີການໃດໜຶ່ງເພື່ອຈະຢຸດຍັ້ງຄວາມຮຸນແຮງ.
- ຮູ້ສຶກຜິດທີ່ຈະເອົາລູກໄປນຳໂດຍບໍ່ມີພໍ່ແຕ່ບາງທີຄຳຖາມທີ່ດີກວ່າເປັນຫຍັງຜູ້ຊາຍຈຶ່ງບໍ່ໜີ: ຖ້າພວກເຮົາຖາມວ່າເປັນຫຍັງລາວຈຶ່ງບໍ່ໜີມັນໝາຍຄວາມ ວ່າພວກເຮົາຄິດວ່ານັ້ນເປັນບັນຫາສ່ວນຕົວຂອງລາວທີ່ຕ້ອງແກ້ໄຂ. ຖ້າຄິດວ່າຄວາມຮຸນແຮງນັ້ນເກີດຂຶ້ນຍ້ອນລາວຜູ້ດຽວນັ້ນແມ່ນຄວາມຄິດທີ່ຜິດ.
- ທັງໝົດໃນຊຸມຊົນຕ້ອງຮັບຜິດຊອບຕໍ່ສຸຂະພາບ ແລະ ສະຫັວດດີພາບຂອງທຸກໆຄົນຢູ່ໃນຊຸມຊົນ.
- ແມ່ນຜູ້ຊາຍທີ່ເປັນຜູ້ລະເມີດສິດທິຂອງແມ່ຍິງວ່າດ້ວຍການດຳລົງຊີວິດທີ່ປອດຈາກການທຳຮ້າຍຂອງຜູ້ຊາຍ ຫຼື ສັງຫານແມ່ຍິງ ການກະທຳແບບນີ້ຄວນຈະຖືກຄັດຄ້ານ ແລະ ຂັດຂວາງ.

HLI Seattle Leadership International
Health Leadership
Field Draft Copy

## ສິ່ງທີ່ຄວນເຮັດ

*ໃຫ້ຄິດເຖິງເລື່ອງ, ເຫຼົ່ານີ້, ເຖິງວ່າທ່ານຈະຄິດວ່າຄວາມຮຸນແຮງຈະບໍ່ເກີດຂຶ້ນອີກແລ້ວ.*



*ຊອກຫາບຸກຄົນໃດໜຶ່ງທີ່ທ່ານໄວ້ໃຈທີ່ສາມາດຊ່ວຍທ່ານແກ້ໄຂຄວາມຮູ້ສຶກ ແລະ ຄິດຫາທາງເລືອກອື່ນໆ.*



*ທ່ານມີຄວາມສາມາດຄວາມຊໍານານທີ່ຈະເອົາອອກມານໍາໃຊ້ເພື່ອໃຫ້ເປັນອາຊີບຂອງທ່ານບໍ່?*

## ສ້າງແຜນເພື່ອຄວາມປອດໄພ

ແມ່ຍິງບໍ່ສາມາດຄວບຄຸມຄວາມຮຸນແຮງຂອງຄູ່ນອນຂອງເຂົາເຈົ້າໄດ້ແຕ່ເຂົາເຈົ້າມີທາງເລືອກທີ່ຈະຕອບຮັບຕໍ່ການກະທໍາຂອງຜູ້ຊາຍໄດ້. ແມ່ຍິງສາມາດວາງແຜນລ່ວງໜ້າໄວ້ເພື່ອໃຫ້ເຂົາເຈົ້າແລະລູກໆປອດໄພຈົນກວ່າຜູ້ຊາຍຈະຢຸດໃຫ້ຊວາມຮຸນແຮງ.

### ກຽມຄວາມປອດໄພໄວ້ ກ່ອນທີ່ຄວາມຮຸນແຮງຈະເກີດ.

- ເລົ່າເລື່ອງຄວາມຮຸນແຮງສູ່ຄົນໃກ້ຄຽງຟັງ. ຂໍຮ້ອງໃຫ້ຄົນຜູ້ນັ້ນຊ່ວຍຖ້າລາວໄດ້ຍິນວ່າທ່ານກໍາລັງຢູ່ໃນອັນຕະລາຍ. ບາງທີຄົນໃກ້ຄຽງ, ພີ່ນ້ອງທີ່ເປັນເພດຊາຍ, ກຸ່ມຂອງແມ່ຍິງ ຫຼື ຜູ້ຊາຍສາມາດມາຮອດກ່ອນທີ່ທ່ານຈະຖືກທໍາຮ້າຍຢ່າງຮຸນແຮງ.
- ຄິດເຖິງສັນຍານ ຫຼື ຄໍາເວົ້າສະເພາະທີ່ເຮັດໃຫ້ລູກ ຫຼື ໃຜຜູ້ໜຶ່ງໃນຄອບຄົວມາຊ່ວຍທ່ານ.
- ບອກໃຫ້ລູກຮູ້ວ່າຈະໄປຮອດບ່ອນທີ່ປອດໄພໄດ້ແນວໃດ.

### ຄວາມປອດໄພໃນໄລຍະທີ່ເກີດຄວາມຮຸນແຮງ.

- ຖ້າທ່ານຮູ້ວ່າ, ຜົວຂອງທ່ານຈະໃຫ້ຄວາມຮຸນແຮງ, ພະຍາຍາມໃຫ້ມັນເກີດຂຶ້ນຢູ່ບ່ອນທີ່ບໍ່ມີອາວຸດ ຫຼື ສິ່ງຂອງທີ່ຜົວຂອງທ່ານສາມາດນໍາໃຊ້ ເພື່ອທໍາຮ້າຍທ່ານ ຫຼື ໃຫ້ເກີດຢູ່ບ່ອນທີ່ທ່ານສາມາດໜີໄດ້.
- ໃຫ້ພິຈະລະນາໃຊ້ສິ່ງທີ່ດີທີ່ສຸດສໍາລັບທ່ານ.
  ເຮັດອັນໃດກໍ່ໄດ້ທີ່ທ່ານສາມາດເຮັດ ເພື່ອ ເຮັດໃຫ້ຜົວຂອງທ່ານຫຼຸດຜ່ອນຄວາມຮຸນແຮງລົງເພື່ອໃຫ້ທ່ານ ແລະ ລູກໆປອດໄພ.
- ຖ້າທ່ານຈໍາເປັນຕ້ອງໜີອອກຈາກລາວ ໃຫ້ຄິດເຖິງທາງໜີທີ່ແລ່ນ ແລະ ບ່ອນໃດທີ່ເປັນບ່ອນປອດໄພທີ່ສຸດ.

### ຄວາມປອດໄພໃນເມື່ອແມ່ຍິງພ້ອມທີ່ຈະໜີ.

- ທ້ອນເງິນໄວ້ເທົ່າທີ່ທ່ານສາມາດເຮັດໄດ້. ເກັບເງິນໄວ້ບ່ອນທີ່ປອດໄພຢູ່ນອກເຮືອນ ຫຼື ອາດຈະເປີດບັນຊີຢູ່ທະນາຄານໂດຍໃສ່ຊື່ຂອງທ່ານເພື່ອເຮັດໃຫ້ທ່ານມີເອກະລາດຫຼາຍກວ່າເກົ່າ.
- ຖ້າທ່ານສາມາດເຮັດໄດ້ຢ່າງປອດໄພ, ໃຫ້ຄິດຫາສິ່ງອື່ນທີ່ທ່ານສາມາດເຮັດໄດ້ໂດຍຫຼຸດຜ່ອນການເອື່ອຍອີງໃສ່ແຕ່ລາວ ເຊັ່ນ: ການມີໝູ່ເພື່ອນ, ເຂົ້າຮ່ວມກິດຈະກໍາກຸ່ມ ຫຼື ໃຊ້ເວລາຢູ່ກັບຄອບຄົວ ພໍ່ແມ່ອ້າຍເອື້ອຍນ້ອງ ຂອງທ່ານຫຼາຍກວ່າເກົ່າ.
- ຊອກຫາ “ເຮືອນທີ່ປອດໄພ” ຫຼື ການບໍລິການອື່ນໆ
  ສໍາລັບແມ່ຍິງທີ່ຖືກທາລຸນ. ຢູ່ບາງເມືອງ, ບາງຄັ້ງອາດຈະມີສະຖານທີ່ສະເພາະສໍາລັບແມ່ຍິງ ແລະ ລູກທີ່ຖືກທາລຸນສາມາດຢູ່ພັກເຊົາໄດ້ໃນໄລຍະໃດໜຶ່ງ. ກ່ອນທີ່ຈະໜີ, ພະຍາຍາມຊອກໃຫ້ໄດ້ໜຶ່ງແຫ່ງບ່ອນທີ່ທ່ານສາມາດໄປເຖິງ.
- ສອບຖາມນໍາໝູ່ສະໜິດ ຫຼື ພີ່ນ້ອງຜູ້ທີ່ທ່ານໄວ້ໃຈວ່າເຂົາເຈົ້າຈະໃຫ້ພັກເຊົາ ຫຼື ໃຫ້ທ່ານຢືມເງິນບໍ່. ຕ້ອງແນ່ໃຈວ່າເຂົາເຈົ້າຈະບໍ່ເລົ່າເລື່ອງນີ້ໃຫ້ຜົວຂອງທ່ານຟັງ.
- ອັດສໍາເນົາເອກະສານທີ່ສໍາຄັນໆ ເຊັ່ນບັດປະຈໍາຕົວຂອງທ່ານ ຫຼື ບັດສັກຢາກັນພະຍາດຂອງລູກໆ. ເກັບມ້ຽນສໍາເນົາໜຶ່ງເອົາໄວ້ເຮືອນ ແລະ ສໍາເນົາໜຶ່ງເອົາຝາກໄວ້ກັບຄົນທີ່ທ່ານໄວ້ໃຈ.
- ເອົາເງິນ, ເຄື່ອງນຸ່ງ ແລະ ເອກະສານສໍາຄັນໄວ້ກັບຄົນທີ່ທ່ານໄວ້ໃຈເພື່ອວ່າທ່ານຈະໄດ້ໜີອອກມາຢ່າງວ່ອງໄວ.
- ຖ້າວ່າມັນເຮັດໄດ້ຢ່າງປອດໄພ, ໃຫ້ຝຶກແຜນການໜີກັບລູກຂອງທ່ານເພື່ອໃຫ້ຮູ້ວ່າມັນໃຊ້ໄດ້ບໍ່.

HLI Seattle
Health Leadership International
Field Draft Copy

## ຖ້າທ່ານຈະໜີ




**ຖ້າທ່ານຕັດສິນໃຈທີ່ຈະໜີ, ທ່ານຈຳເປັນຕ້ອງໄດ້ກຽມຕົວກຽມໃຈເພື່ອປະເຊີນ ກັບບັນຫາອື່ນໃໝ່ ຊຶ່ງອາດຈະເກີດຂຶ້ນເຊັ່ນ:**

**ຄວາມປອດໄພ.** ເວລາທີ່ອັນຕະລາຍທີ່ສຸດສຳລັບແມ່ຍິງແມ່ນຫຼັງຈາກທີ່ເຂົາເຈົ້າໜີ. ຜູ້ຊາຍໄດ້ເສຍການຄວບຄຸມເຂົາເຈົ້າໄປ ແລະ ຈະເຮັດທຸກຢ່າງທີ່ຈະໃຫ້ເຂົາເຈົ້າກັບຄືນມາ. ຜູ້ຊາຍອາດຈະຕິດຕາມເຂົາເຈົ້າໄປ ແລະ ຂ້າເຂົາເຈົ້າໃຫ້ຕາຍ. ແມ່ຍິງຄວນຈະແນ່ໃຈວ່າເຂົາເຈົ້າໄດ້ອາໄສຢູ່ບ່ອນທີ່ປອດໄພ ແລະ ເປັນບ່ອນທີ່ຜູ້ຊາຍບໍ່ຮູ້ ຫຼື ຜູ້ບ່ອນທີ່ຖືກຄຸ້ມກັນຢ່າງປອດໄພ. ແມ່ຍິງບໍ່ຄວນບອກໃຜໝົດວ່າເຂົາເຈົ້າຢູ່ໃສເພາະວ່າຜູ້ຊາຍອາດຈະໄປບັງຄັບເຂົາເຈົ້າໃຫ້ບອກເຂົາວ່າແມ່ຍິງຢູ່ບ່ອນໃດ.

ດຳລົງຊີວິດດ້ວຍຕົວຂອງທ່ານເອງ. ທ່ານຈຳເປັນຕ້ອງຊອກຫາວິທີເພື່ອລ້ຽງຕົວທ່ານເອງ ແລະ ລູກໆ. ຖ້າທ່ານສາມາດອາໄສຢູ່ນຳໝູ່ເພື່ອນ ຫຼື ພີ່ນ້ອງຂອງທ່ານ, ໃຫ້ໃຊ້ເວລານັ້ນເພື່ອຍົກລະດັບຄວາມຮູ້ ແລະ ອາຊີບເພີ່ມ. ເພື່ອປະຢັດເງິນ, ທ່ານອາດຈະຢູ່ຮ່ວມກັບແມ່ຍິງຜູ້ອື່ນທີ່ຖືກທາລຸນເໝືອນກັນ.




ເລີ່ມຕົ້ນໃຫ້ມີການຊຸກຍູ້ການເຮັດວຽກເປັນກຸ່ມ.

**ຄວາມຮູ້ສຶກ:** ສິ່ງຕ່າງໆທີ່ທ່ານຕ້ອງການຈະຈັດການສຳລັບຊີວິດໃໝ່ຂອງທ່ານອາດຈະ ຮູ້ສຶກວ່າມັນໜັກເກີນໄປທີ່ຈະປະເຊີນກັບມັນ. ທ່ານອາດຈະຮູ້ສຶກຢ້ານ ແລະ ໂດດດ່ຽວ ເພາະວ່າທ່ານບໍ່ເຄີຍຢູ່ຜູ້ດຽວໃນສະຖານທີ່ແຕກຕ່າງຢ່າງນີ້. ທ່ານອາດຈະຄິດຮອດຜົວຂອງທ່ານ, ເຖິງວ່າລາວໄດ້ກະທຳສິ່ງທີ່ບໍ່ດີກັບທ່ານ ກໍ່ຕາມ. ໃນເມື່ອສິ່ງຕ່າງໆປາກົດວ່າຫຍຸ້ງຍາກຫຼາຍ, ທ່ານອາດຈະຫຼົງລືມສິ່ງໂຫດຮ້າຍຕ່າງໆທີ່ເກີດຂຶ້ນກ່ອນທີ່ທ່ານຈະໜີ. ຈົ່ງໃຫ້ເວລາກັບທ່ານທີ່ຈະຮູ້ສຶກໂສກເສົ້າກັບການທີ່ສູນເສຍຄູ່ນອນໄປ ແລະ ເສຍການດຳລົງຊີວິດທີ່ເຄີຍຢູ່ມາກ່ອນ. ພະຍາຍາມຢູ່ຢ່າງເຂັ້ມແຂງ. ຖ້າທ່ານສາມາດຊອກໄດ້ໃຫ້ໄປໂອ້ລົມກັບແມ່ຍິງທີ່ຢູ່ໃນສະພາບດຽວກັນກັບທ່ານ, ທັງສອງຄົນຈະສາມາດຊ່ວຍເຫຼືອເຊິ່ງກັນ ແລະ ກັນໄດ້.

## ໃຊ້ຄວາມພະຍາຍາມເພື່ອປ່ຽນແປງສະພາບການ

*ຈົ່ງລະວັງ! ຢູ່ໃນບາງຊຸມຊົນການເຮັດວຽກຕ້ານກັບຄວາມຮຸນແຮງອາດຈະເປັນອັນຕະລາຍ.*

ເພື່ອປ່ຽນແປງສິ່ງທີ່ເກີດຂຶ້ນ, ທຸກຄົນຕ້ອງເຊົາຄິດວ່າຄວາມຮຸນແຮງທີ່ເກີດກັບແມ່ຍິງ ເປັນພຽງແຕ່ "ມັນກໍ່ເປັນໄປຕາມເລື່ອງ" ຫຼື ເກີດຂຶ້ນຍ້ອນຄວາມຜິດຂອງແມ່ຍິງ. ຕໍ່ໄປນີ້ແມ່ນບາງແນວຄິດເພື່ອຊ່ວຍຢຸດຢັ້ງຄວາມຮຸນແຮງຢູ່ໃນຊຸມຊົນ ຂອງທ່ານ.

### ໂອ້ລົມກ່ຽວກັບຄວາມຮຸນແຮງ

ໂອ້ລົມກັນເລື່ອງຄວາມທາລຸນແມ່ນບາດກ້າວທຳອິດທີ່ຈະປ່ຽນແປງມັນ. ພະຍາຍາມ ຊອກຫາແມ່ຍິງທີ່ມີບັນຫາກັບຜູ້ຊາຍທີ່ໃຊ້ຄວາມຮຸນແຮງ ແລະ ທາລຸນ, ຫຼັງຈາກນັ້ນກໍ່ແລກປ່ຽນຄວາມຄິດເຫັນເຊິ່ງກັນ ແລະ ກັນ. ຊອກພົບຜູ້ຊາຍ ທີ່ເຫັນວ່າຄວາມຮຸນແຮງເປັນສິ່ງທີ່ຜິດພາດ. ເຮັດໃຫ້ເລື່ອງຄວາມຮຸນແຮງເປັນທີ່ກ່າວເຖິງຂອງແຕ່ລະຄົນ. ເຮັດອັນໃດກໍ່ໄດ້ເພື່ອໃຫ້ຄົນຄິດວ່າຄວາມຮຸນແຮງນັ້ນເປັນເລື່ອງທີ່ຜິດພາດ

FHI Seattle
Health Leadership International
Field Draft Copy

## ຈັດຕັ້ງບໍລິການເພື່ອຊ່ວຍເຫຼືອແມ່ຍິງທີ່ໜີຈາກຄວາມຮຸນແຮງ



- ຈັດຕັ້ງເຮືອນ ຫຼື ບ່ອນພັກເຊົາທີ່ປອດໄພໄວເທົ່າທີ່ຈະໄວໄດ້. ສະຖານທີ່ດັ່ງກ່າວເຊື່ອງຊ້ອນສະຖານທີ່ນັ້ນ ແລະ ເຮັດຢ່າງປິດລັບ.
- ຂໍການຊ່ວຍເຫຼືອຈາກຜູ້ອື່ນ, ໂດຍສະເພາະການຈັດຕັ້ງທີ່ໃຫຍ່ ແລະ ມີອຳນາດຫຼາຍກວ່າ. ຕົວຢ່າງ: ຕາໜ່າງຂອງອົງການ ດ້ານສຸຂະພາບຢູ່ປະເທດຂອງທ່ານ ເຊິ່ງອາດຈະຊ່ວຍໄດ້. ທ່ານສາມາດປຶກສາກັບອຳນາດການປົກຄອງຊຸມຊົນຜູ້ທີ່ ທ່ານໄວ້ໃຈໄດ້. ເຕົ້າໂຮມເອົາຜູ້ຊາຍຫຼາຍເທົ່າທີ່ຈະຫຼາຍໄດ້ໃຫ້ມາຮ່ວມມືກັບທ່ານ.
- ຊ່ວຍໃຫ້ແມ່ຍິງຮຽນຮູ້ກ່ຽວກັບສິດຂອງເຂົາເຈົ້າພາຍໃຕ້ກົດໝາຍ ເຊັ່ນ: ກົດໝາຍຄອບຄົວ ແລະ ກົດໝາຍອື່ນໆທີ່ຕ້ານກັບຄວາມຮຸນແຮງທີ່ແມ່ຍິງສາມາດນຳມາໃຊ້ໄດ້.
- ຊອກຫາຊ່ອງທາງ ເພື່ອຝຶກວິຊາຊີບໃໝ່ໃຫ້ແກ່ແມ່ຍິງ, ເພື່ອໃຫ້ແມ່ຍິງທີ່ຖືກທາລຸນມີຄວາມສາມາດລ້ຽງຕົນເອງໄດ້.

## ໃຊ້ຄວາມກົດດັນຂອງສັງຄົມ

ຄວາມກົດດັນຂອງສັງຄົມເພື່ອກັນບໍ່ໃຫ້ຄົນເຮົາເຮັດໃນສິ່ງທີ່ຜິດພາດມີອັນໃດແດ່? ຢູ່ບາງທ້ອງຖິ່ນແມ່ນຕຳຫຼວດ, ບາງບ່ອນແມ່ນທະຫານ, ຄອບຄົວ ຫຼື ສາດສະໜາ. ແຕ່ສ່ວນຫຼາຍແມ່ນການຮ່ວມມືຂອງການຈັດຕັ້ງທີ່ກ່າວນັ້ນທັງໝົດ.

ຊຸກຍູ້ໃຫ້ຜູ້ນຳຊຸມຊົນ ແລະ ຜູ້ຊາຍຜູ້ອື່ນໆ ໃຫ້ກ່າວຕໍ່ຕ້ານຄວາມຮຸນແຮງ ແລະ ສະແດງໃຫ້ ຊຸມຊົນເຫັນວ່າເຂົາເຈົ້າບໍ່ອະນຸຍາດໃຫ້ຜູ້ຊາຍຜູ້ໃດຂ້ຽນຕີແມ່ຍິງ. ພະຍາຍາມໃຊ້ທຸກໆຄວາມກົດດັນທີ່ມີຢູ່ໃນສັງຄົມບ່ອນທີ່ທ່ານອາໄສຢູ່ໃຫ້ກັນບໍ່ໃຫ້ຜູ້ຊາຍທາລຸນແມ່ຍິງ.

> ຢູ່ບາງຊຸມຊົນໃນທະວີບອາເມລິກາກາງ, ມີອາສາສະໝັກເພດຊາຍອອກໄປກວດລາດຕະເວນເພື່ອແຈ້ງເຫດຮ້າຍ ແລະ ເພື່ອປ້ອງກັນຊາວບ້ານຈາກອາຊະຍະກຳຢູ່ໃນຊຸມຊົນເຫຼົ່ານີ້, ຄວາມຮຸນແຮງຕໍ່ແມ່ຍິງເປັນທີ່ຍອມຮັບບໍ່ໄດ້. ຖ້າຜູ້ຊາຍຕີເມຍຂອງເຂົາເຈົ້າ ເຂົາເຈົ້າຮູ້ວ່າຜູ້ຊາຍຜູ້ອື່ນຢູ່ໃນເມືອງນີ້ຈະລົງໂທດເຂົາເຈົ້າ.

ຢູ່ບາງປະເທດ, ແມ່ຍິງໄດ້ຈັດຕັ້ງເພື່ອຮຽກຮ້ອງໃຫ້ມີກົດໝາຍເພື່ອຕັດສິນລົງໂທດຜູ້ຊາຍຜູ້ທີ່ທາລຸນເມຍຂອງຕົນເອງ, ແຕ່ບາງຄັ້ງການປະຕິບັດກົດໝາຍກໍ່ບໍ່ໄດ້ໃຫ້ຜົນແກ່ແມ່ຍິງທີ່ຖືກທາລຸນສະເໝີໄປ. ບາງຄັ້ງ, ຜູ້ທີ່ປົກປ້ອງການປະຕິບັດກົດໝາຍ ເຊັ່ນ ຕຳຫຼວດ, ນັກກົດໝາຍ ແລະ ຜູ້ພິພາກສາກໍ່ບໍ່ສາມາດໄວ້ວາງໃຈໄດ້. ແຕ່ຖ້າວ່າລະບົບກົດໝາຍ ແລະ ຕຳຫຼວດສາມາດປົກປ້ອງແມ່ຍິງ ຢູ່ທ້ອງຖິ່ນທີ່ທ່ານອາໄສຢູ່ນັ້ນ ເຮັດ ວຽກໄດ້ຢ່າງມີປະສິດທິພາບ,ໃຫ້ພະຍາຍາມຮ່ຳຮຽນກົດໝາຍ ແລະ ສິດທິຂອງແມ່ຍິງໃຫ້ຫຼາຍເທົ່າທີ່ທ່ານຈະເຮັດໄດ້.

ລ້ຽງລູກຂອງທ່ານໃຫ້ດຳລົງຊີວິດໂດຍປາສະຈາກຄວາມຮຸນແຮງ. ທ່ານສາມາດປັບປຸງສະພາບການຢູ່ເຮືອນຂອງທ່ານ ໂດຍການຊ່ວຍເຫຼືອ ລູກຂອງທ່ານ ແກ້ໄຂບັນຫາດ້ວຍວິທີສັນຕິ. ສິດສອນລູກຜູ້ຊາຍໃຫ້ນັບຖືຕົວເອງ



HLI Seattle Health Leadership International Field Draft Copy

ອສບ ສາມາດມີບົດບາດຫຼາຍຂຶ້ນເພື່ອຢຸດຢັ້ງຄວາມຮຸນແຮງທີ່ເກີດຂຶ້ນກັບແມ່ຍິງ. ມັນຍັງບໍ່ທັນພຽງພໍທີ່ຈະປິ່ນປົວພຽງແຕ່ບາດແຜທີ່ເກີດຂຶ້ນຈາກຄວາມຮຸນແຮງຢູ່
ນຳແມ່ຍິງເທົ່ານັ້ນ.

## ບາງຂໍ້ແນະນຳ ສຳລັບ ອສບ

**ເວລາທີ່ທ່ານກວດແມ່ຍິງ, ໃຫ້ກວດຊອກຫາອາການທີ່ເກີດຈາກຄວາມຮຸນແຮງ** ຜູ້ຊາຍມັກຈະຕີເມຍຂອງລາວບ່ອນທີ່ຜູ້ອື່ນຈະບໍ່ສັງເກດເຫັນໄດ້. ແມ່ຍິງທີ່ຖືກຕີກໍ່ຈະນຸ່ງເຄື່ອງປົກປິດໄວ້. ຍ້ອນວ່າທ່ານເປັນ ອສບ, ທ່ານແມ່ນຜູ້ໜຶ່ງໃນຈຳນວນໜ້ອຍຄົນທີ່ເຫັນພາກສ່ວນປິດລັບຂອງຮ່າງກາຍຂອງແມ່ຍິງ.



ຖ້າວ່າທ່ານເຫັນຮອຍທີ່ຜິດປົກກະຕິ, ຮອຍຂູດ ຫຼື ຮອຍແປ້ວໃຫ້ຖາມ ແມ່ຍິງຜູ້ນັ້ນມັນເກີດຂຶ້ນໄດ້ແນວໃດ ຫຼື ແມ່ຍິງມາຫາທ່ານຍ້ອນອາການເຈັບ, ເລືອດອອກ ຫຼື ກະດູກຫັກ ແລະ ມີບາດແຜອື່ນໆ ໃຫ້ຖາມລາວວ່າໄດ້ຖືກທຸບຕີ ຫຼື ບໍ່. ຈົ່ງຈື່ໄວ້ວ່າມີບາດແຜຫຼາຍໆຢ່າງທີ່ແມ່ຍິງຈະເວົ້າວ່າເກີດຂຶ້ນຍ້ອນອຸບັດຕິເຫດ. ປອບໃຈລາວໃຫ້ລາວໝັ້ນໃຈວ່າທ່ານ ຈະບໍ່ເຮັດຫຍັງຖ້າລາວບໍ່ອະນຸຍາດ.

**ບັນທຶກທຸກໆຢ່າງທີ່ເຫັນ.** ໃນເວລາທີ່ທ່ານເຫັນແມ່ຍິງຜູ້ໜຶ່ງທີ່ຖືກທາລຸນໃຫ້ທ່ານແຕ້ມຮູບທ່ານເບື້ອງໜ້າ ແລະ ທາງຫຼັງຂອງລາວແລ້ວ ໝາຍຈຸດທີ່ມີບາດແຜ. ບັນທຶກຊື່ຂອງບຸກຄົນທີ່ທາລຸນລາວ. ພະຍາຍາມຊອກຮູ້ວ່າການທາລຸນນັ້ນເກີດຂຶ້ນຈັກເທື່ອແລ້ວກ່ອນໜ້ານີ້. ຖາມລາວວ່າຄົນຜູ້ອື່ນໃນຄອບຄົວກໍ່ຖືກທາລຸນເຊັ່ນກັນບໍ່ເຊັ່ນ: ເອື້ອຍ ຫຼື ນ້ອງສາວຂອງລາວ ຫຼື ພວກລູກໆເດ. ຖ້າລາວຢູ່ໃນສະພາບທີ່ອັນຕະລາຍໃຫ້ຊ່ວຍລາວຕັດສິນໃຈເຮັດໃນສິ່ງທີ່ລາວຢາກເຮັດ. ເຖິງວ່າລາວຢາກຈະໜີ ຫຼື ບໍ່ໃຫ້ຊ່ວຍລາວວາງແຜນເພື່ອຄວາມປອດໄພ.




*ລາຍລະອຽດກ່ຽວກັບການປິ່ນປົວບາດແຜຢູ່ນຳແມ່ຍິງໃຫ້ເບິ່ງເພີ່ມ* **ຢູ່ປຶ້ມໄກແພດ** *ແລະ ເອກະສານກ່ຽວກັບສຸຂະພາບອື່ນໆ.*

ຖ້າວ່າລາວຢາກຈະໄປແຈ້ງຕຳຫຼວດໃຫ້ໄປນຳລາວ ແລະ ໃຫ້ແນ່ໃຈວ່າຕຳຫຼວດໄດ້ບັນທຶກຄຳຮ້ອງຟ້ອງຂອງລາວຢ່າງຈິງຈັງ. ທ່ານສາມາດຊ່ວຍລາວໃຫ້ໄດ້ພົບກັບແມ່ຍິງຜູ້ອື່ນໆທີ່ຖືກທາລຸນ. ພວກເຂົາເຈົ້າຈະຊ່ວຍກັນຊອກຫາຊ່ອງທາງແກ້ໄຂບັນຫາໄດ້.

### ຊັບພະຍາກອນອັນໃດແດ່ທີ່ມີຢູ່ເພື່ອຊ່ວຍເຫຼືອແມ່ຍິງທີ່ຖືກທາລຸນ? ໃຫ້ຊອກຫາ:

- ການຊ່ວຍເຫຼືອທາງດ້ານກົດໝາຍ
- ທີ່ພັກທີ່ປອດໄພ
- ໂຄງການສ້າງລາຍຮັບຂອງແມ່ຍິງ
- ບໍລິການດ້ານສຸຂະພາບຈິດ
- ໂຄງການສຶກສາຜູ້ໃຫຍ່ເພື່ອໃຫ້ອ່ານ ແລະ ຂຽນໄດ້ ຫຼື ບໍລິການສຶກສາອື່ນໆ.



ເຮັດໃຫ້ຄົນໃນຊຸມຊົນເຫັນຜົນຮ້າຍຂອງຄວາມຮຸນແຮງ.

**ຊ່ວຍເຫຼືອຜູ້ຊາຍ.** ຢູ່ບາງຊຸມຊົນ, ຜູ້ຊາຍໄດ້ເຂົ້າມາຮ່ວມກຸ່ມກັນເພື່ອຊ່ວຍເຫຼືອຜູ້ຊາຍ ໃຫ້ຢຸດເຊົາການທາລຸນ. ໂດຍການສົນທະນາ ແລະ ຫຼິ້ນບົດບາດສົມມຸດ, ຜູ້ຊາຍກຸ່ມນີ້ໄດ້ຊ່ວຍໃຫ້ຜູ້ຊາຍຮູ້ວິທີໃໝ່ເພື່ອສະແດງອອກຄວາມຮູ້ສຶກ ແລະ ຄວບຄຸມພຶດຕິກຳຂອງຕົນເອງ. ສະເໜີຂໍໃຫ້ຜູ້ນຳທາງສາດສະໜາ ແລະ ຜູ້ນຳຊຸມຊົນຊ່ວຍໃຫ້ຈັດຕັ້ງກຸ່ມແບບນີ້ ແລະ ເພື່ອເອົາຊະນະໃຈຜູ້ຊາຍ ທຸກໆຄົນ, ພວກເຂົາເຈົ້າຄວນຈະຮັບຜິດຊອບຕໍ່ການຢຸດເຊົາຄວາມທາລຸນຕໍ່ແມ່ຍິງທຸກຄົນ.

HLI Seattle
Health Leadership International
Field Draft Copy